

ໃນວັນທີ 30 ກໍລະກົດ 2026 ເວລາ 17:30 ໂມງ ທີ່ຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ, ໄດ້ມີພິທີ ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ເພື່ອສຶກສາສຳຫຼວດຄວາມເປັນໄປໄດ້ໃນການພັດທະນາໂຄງການປູກໄມ້ເສດຖະກິດ, ພືດພະລັງງານທົດແທນ ແລະ ພືດທີ່ໃຫ້ຜົນຜະລິດນ້ຳມັນ ຢູ່ເຂດບ້ານປາກຍັນ, ບ້ານນາດີ ແລະ ບ້ານສີສະຫວາດ, ເມືອງແມດ, ແຂວງວຽງຈັນ, ລະຫວ່າງ ລັດຖະບານແຫ່ງ ສປປ ລາວ ກັບ ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ, ໃຫ້ກຽດເຂົ້າຮ່ວມໂດຍ ທ່ານ ນາງ ພອນວັນ ອຸທະວົງ ຮອງລັດຖະມົນຕີ, ຮອງປະທານ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ, ທ່ານ ນາງ ທອງຈັນ ອະຂະມາເຂດ ຫົວໜ້າຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ທ່ານ ແສງຈັນ ດາລາວົງ ຫົວໜ້າຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແຂວງວຽງຈັນ, ທ່ານ ປອ ເສດ ພັດທະນະມາດ ຜູ້ອຳນວຍການໃຫຍ່ ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ, ທ່ານ ປອ ນາງ ຄຳແພງ ພັດທະດາວົງ ຮອງປະທານສະພາບໍລິຫານ ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ.



ເປັນກຽດລົງນາມໃນພິທີເຊັນສັນຍາ MOU ຄັ້ງນີ້ໂດຍ:

- ທ່ານ ນາງ ພອນວັນ ອຸທະວົງ — ຮອງລັດຖະມົນຕີ, ຮອງປະທານ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ
- ທ່ານ ນາງ ທອງຈັນ ອະຂະມາເຂດ — ຫົວໜ້າຫ້ອງການ ກະຊວງກະສິກຳ ແລະ ສິ່ງແວດລ້ອມ
- ທ່ານ ແສງຈັນ ດາລາວົງ — ຫົວໜ້າຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແຂວງວຽງຈັນ
- ທ່ານ ປອ ເສດ ພັດທະນະມາດ — ຜູ້ອຳນວຍການໃຫຍ່ ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ
- ທ່ານ ປອ ນາງ ຄຳແພງ ພັດທະດາວົງ — ຮອງປະທານສະພາບໍລິຫານ ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ

ໃນການຮ່ວມມືລົງນາມໃນພິທີເຊັນສັນຍາ MOU ນີ້ເປັນບາດກ້າວສຳຄັນໃນການສ້າງພາລະບົດບາດ ຂອງບໍລິສັດ ລາວ ອາໂກຣເທັກ ມະຫາຊົນ ເຊິ່ງເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ສ້າງພື້ນທີ່ປ່າເພື່ອຄວາມຍັ້ງຢືນທາງສິ່ງແວດລ້ອມ, ສ້າງວຽກງານໃຫ້ກັບປະຊາຊົນ ແລະ ແຮງງານໃນຊຸມຊົນທ້ອງຖິ່ນ, ສ້າງລະບົບສາທາລະນູປະໂພດໃນພື້ນທີ່ຊຸມຊົນໃນເຂດຮອບໂຄງການ, ຂັບເຄື່ອນການປູກໄມ້ເສດຖະກິດໃຫ້ເປັນໄປຕາມມາດຕະຖານລະດັບສາກົນ ເຊັ່ນ ISCC, FSC ແລະ PEFC ເປັນຕົ້ນ.